ທະນາຄານແຫ່ງ ສປປ ລາວ
BANK OF THE LAO PDR
ຂ່າວ NEWS
ໜ່ວຍງານຂ່າວສານ ພະແນກສັງລວມ ຫ້ອງການ ທຫລ
ໂທ /ແຟັກ ( 856-21) 260283



# ທນບ ສືບຕໍ່ນຳໃຊ້ແຫຼ່ງທຶນ ມີຜົນຕາມເປົ້າໝາຍຂອງລັດຖະບານ



ກອງປະຊຸມສະພາບໍລິຫານທະນາຄານນະໂຍບາຍ (ທນບ) ໄດ້ຈັດຂຶ້ນໃນວັນທີ 5 ພຶດສະພາ 2020 ທີ່ນະຄອນຫຼວງວຽງຈັນ ພາຍໃຕ້ການເປັນປະທານຂອງທ່ານ ສອນໄຊ ສິດພະໄຊ ຜູ້ວ່າການທະນາຄານແຫ່ງ ສປປ ລາວ, ປະທານສະພາບໍລິຫານ ທນບ; ພ້ອມນີ້, ກໍ່ມີບັນດາຄະນະກຳມະການສະພາບໍລິຫານ ທນບ, ບັນດາຄະນະອຳນວຍການ ທນບ ແລະ ພະນັກງານທີ່ກ່ຽວຂ້ອງເຂົ້າຮ່ວມ.

ທ່ານ ວຸດທິ ເລື່ອນວິໄລວົງ ຜູ້ອຳນວຍການ ທນບ ໄດ້ລາຍງານຜົນການຈັດຕັ້ງປະຕິບັດການສະໜອງສິນເຊື່ອ ມາຮອດປະຈຸບັນມີຍອດສິນເຊື່ອຮອດທ້າຍປີ 2019 ຈຳນວນ 2.936,51 ຕື້ກີບ, ເທົ່າກັບ 103% ຂອງແຜນປີ (2.859,6 ຕື້ກີບ)  ໃນນີ້ຍອດສິນເຊື່ອລາຍກຸ່ມຈຳນວນ 1.927,01 ຕື້ກີບ ກວມເອົາ 18 ແຂວງ, 125 ເມືອງ, 3.340 ບ້ານ, 53.193 ກຸ່ມ 190.234 ຄອບຄົວ ໃນນີ້ເປັນຄອບຄົວທຸກຍາກ 40.203 ຄອບຄົວ ເທົ່າກັບ 21% ແລະ ຍອດສິນເຊື່ອລາຍບຸກຄົນຈຳນວນ 1.009,50 ຕື້ກີບ, 2.484 ລາຍ, ໄລຍະສັ້ນ 266,17 ຕື້ກີບ, ໄລຍະກາງ 765,02 ຕື້ກີບ, ໄລຍະຍາວ 1.905,31 ຕື້ກີບ.

ຍອດສິນເຊື່ອກວມເອົາບັນດາຂະແໜງການຜະລິດມີ ປູກຝັງຈຳນວນ 944,02 ຕື້ກີບ, ລ້ຽງສັດ 1.712,18 ຕື້ກີບ, ຫັດຖະກຳ 35,77 ຕື້ກີບ, ອຸດສາຫະກຳປຸງແຕ່ງ 83,70 ຕື້ກີບ, ການບໍລິການ 160,81 ຕື້ກີບ. ຍອດສິນເຊື່ອແຍກຕາມຂົງເຂດໃຫ້ບໍລິການໃນເມືອງເປົ້າໝາຍຈຳນວນ 1.903,10 ຕື້ກີບ, ຈຸດສຸມລັດຖະບານ-ທ້ອງຖິ່ນ 320,28 ຕື້ກີບ ແລະ ບ້ານ 3 ສ້າງ 296,38  ຕື້ກີບ; ໂຄງການຜະລິດສິນຄ້າ 416,75 ຕື້ກີບ.

ຜ່ານການຈັດຕັ້ງປະຕິບັດຕົວຈິງ ສາມາດປະເມີນປະສິດທິຜົນສິນເຊື່ອເປົ້າໝາຍຕ່າງໆຄື: ເປົ້າໝາຍລ້ຽງງົວຈຳນວນ 1.026,30 ຕື້ກີບກວມເອົາ 52,552 ຄອບຄົວ, ຊື້ງົວ 193.916 ໂຕ, ເປົ້າໝາຍລ້ຽງແບ້ 75,63 ຕື້ກີບ, 4.009 ຄອບຄົວ, ຊື້ແບ້ມາລ້ຽງ 21.443 ໂຕ, ເປົ້າໝາຍລ້ຽງໝູ 271,80 ຕື້ກີບ, 10.853 ຄອບຄົວ, ຊື້ໝູມາລ້ຽງ 62.635 ໂຕ, ເປົ້າໝາຍລ້ຽງຄວາຍ 18,76 ຕື້ກີບ, 929 ຄອບຄົວ, ຊື້ຄວາຍມາລ້ຽງ 2.839ໂຕ, ປູກໝາກແໜ່ງ 74,78 ຕື້ກີບ, 3.670 ຄອບຄົວ, ເນື້ອທີ່ການຜະລິດ 450 ເຮັກຕາ, ຜົນຜະລິດ 200 ໂຕນ, ປູກມັນຕົ້ນ 152,95 ຕື້ກີບ ກວມເອົາ 6.461 ຄອບຄົວ, ເນື້ອທີ່ການຜະລິດ 31.900 ເຮັກຕາ, ຜົນຜະລິດ 127.511 ໂຕນ, ປູກເຂົ້ານາປີ 23,63 ຕື້ກີບ ກວມເອົາ 6.898 ຄອບຄົວ, ເນື້ອທີ່ການຜະລິດ 3.020 ເຮັກຕາ, ຜົນຜະລິດ 12.075 ໂຕນ.

ສຳລັບໃນໄລຍະປີ 2019 ໄດ້ເກີດມີຜົນເສຍຫາຍຈາກໄພນໍ້າຖ້ວມ 6 ແຂວງ, 20 ເມືອງ, 156 ບ້ານ, 2.985 ຄອບຄົວວົງເງິນກູ້ຢືມທັງໝົດ 45,59 ຕື້ກີບ, ມູນຄ່າຄວາມເສຍຫາຍຕົວຈິງ 26,79 ຕື້ກີບ ປະຈຸບັນ ທນບ ກຳລັງກຳນົດວິທີທາງແກ້ໄຂ, ປະຕິບັດນະໂຍບາຍຕ່າງໆ ແລະ ສ້າງແຜນຟື້ນຟູຊ່ວຍລູກຄ້າທີ່ຖືກຜົນກະທົບຕາມລະບຽບ, ຂັ້ນຕອນຂອງ ທນບ. ພ້ອມດຽວກັນ ກໍ່ເກີດມີພະຍາດລະບາດ (ພະຍາດອະຫິວາໝູອາຟຣິກກາ) ຢູ່ 3 ແຂວງ, 6 ເມືອງ, 42 ບ້ານ, 207 ກຸ່ມ, 1.174 ຄອບຄົວ ມູນຄ່າທີ່ຖືກຜົນກະທົບທັງໝົດ 10,06 ຕື້ກີບມີໝູ 7.383 ໂຕ.

ທ່ານຜູ້ອຳນວຍການ ທນບ ໄດ້ສະເໜີແຜນວຽກຈຸດສຸມປະຈຳປີ 2020 ໂດຍສືບຕໍ່ປັບປຸງກົງຈັກການຈັດຕັ້ງພາຍໃນ ແລະ ປັບປຸງກົງຈັກການຈັດຕັ້ງບາງຂະແໜງການທີ່ຂຶ້ນກັບພະແນກພາຍໃນສຳນັກງານໃຫຍ່. ສ້າງຍຸດທະສາດການສະໜອງສິນເຊື່ອໃນໄລຍະໃໝ່, ປັບປຸງນິຕິກຳເປັນຕົ້ນລະບຽບການຄຸ້ມຄອງພະນັກງານ, ລະບຽບສະຫວັດດີການ, ລະບຽບອື່ນໆໃຫ້ສອດຄ່ອງ ແລະ ເໝາະສົມກ່ວາເກົ່າ. ສະເໜີຂໍແຫຼ່ງທຶນຈາກ ທຫລ ເພື່ອສະໜອງສິນເຊື່ອປະຈຳປີ 2020 ຄາດຄະເນແຜນການທັງໝົດ 295,22 ຕື້ກີບ, ໃນນີ້ໄລຍະສັ້ນ 37,56 ຕື້ກີບ, ໄລຍະກາງ 92,74 ຕື້ກີບ ແລະ ໄລຍະຍາວ 164,92 ຕື້ກີບ. ສືບຕໍ່ປ່ອຍສິນເຊື່ອແຜນການປີ 2020 ໃຫ້ໄດ້ຕາມແຜນການ 326,76 ກີບ ແລະ ວຽກສຳຄັນອື່ນໆອີກຈຳນວນໜຶ່ງ.

**# ຂ່າວ: ຣັດສະໝີ ດວງສັດຈະ**